# ທັມມະນູນ -⁄ ກົດຣະບຽບສະມາຄົມລາວ-ອະເມຣິກັນ

ນະຄອນຮິວສະຕັນ, ຣັຖເທັກຊັສ

(ສະບັບດັດແປງ-ແກ້ໄຂ-ເພີ່ມຕື່ມ)

## ມາຕຣາ 1: ຊື່, ສຳນັກງານ ແລະ ສັນຍາລັກ

1.1 ອົງການຈັດຕັ້ງນີ້ຊື່ " ສະມາຄົມລາວ-ອະເມຣິກັນ Lao American Association, ຊື່ຫຍໍ້ ສລອ.-LAA.

1.2 ສຳນັກງານໃຫຍ່ສະມາຄົມຕັ້ງຢູ່ ນະຄອນຮິວສະຕັນ ແຂວງຮາຣິສ ຣັຖເທັກຊັສ. ສຳນັກງານສາຂາ ອາດຕັ້ງຢູ່ເມືອງຕ່າງໆ ທັງໃນ ແລະນອກ ຣັຖເທັກຊັສ.

1.3 ສຳນັກງານ ຊົ່ວຄາວ ຕັ້ງຢູ່ ເລກທີ່ 8350 Blacksmith Drive, Houston, Texas 77064 .

1.4 ເຄື່ອງໝາຍ ຫລື ສັນຍາລັກຂອງສະມາຄົມຄື: ຮູບຊ້າງສາມຫົວ ຢູ່ກາງແຜນທີ່ຣັຖເທັກຊັສ ມີວົງມົນສອງ ວົງອ້ອມ ຢູ່ກາງເສັ້ນວົງມົນ ມີຊື່ຂອງສະມາຄົມ ເປັນພາສາລາວ ແລະ ອັງກິດວ່າ: ສະມາຄົມລາວ-ອະເມຣິກັນ, ນະຄອນ ຮິວສະຕັນ ຣັຖເທັກຊັສ. LaoAmerican Association of Houston,Texas.

## ມາຕຣາ 2 ຈຸດປະສົງ ຫລື ອຸດົມການ

2.1 ເພື່ອ ຮັກສາມູນເຊື້ອ ຄວາມເປັນລາວໄວ້ ໃຫ້ຄົງຢູ່ຕລອດໄປ ດ້ວຍການສົ່ງເສີມ ໃຫ້ອະນຸຮັກແລະ ປະຕິບັດຮີດຄອງ ປະເພນີ ສິລປະ ແລະ ວັທນະທັມລາວ.

2.2 ເສີມສ້າງ ຄວາມສາມັຄຄີ ເຊື່ອມຕໍ່ຄວາມສັມພັນ ໃນສັງຄົມຂອງຊຸມຊົນລາວ ໃຫ້ໝັ້ນຄົງຕື່ມຂຶ້ນ.

2.3 ຊ່ອຍ ບັນເທົາທຸກຄອບຄົວ ເພື່ອນສະມາຊິກ ທີ່ປະສົບເຄາະຮ້າຍ-ເສັຽຊີວິຕ.

2.4 ສົ່ງເສີມສັຕຣີລາວ ໃຫ້ມີຖານະ ມີບົດບາດໃນສັງຄົມລາວ ແລະ ສັງຄົມອະເມຣິກັນ.

2.5 ປຸກລະດົມຄົນລາວ ເປັນຕົ້ນຊາຍໜຸ່ມ ຍິງສາວລາວ ໃຫ້ຕື່ນຕົວ ສົນໃຈ ການສຶກສາ ຮຽນຮູ້ ແລະ ພັທະນາຕົນເອງ ທັງຢູ່ໃນ ແລະ ນອກໂຮງຮຽນ.

2.6 ສ້າງບັນຍາກາດ ໃຫ້ເກີດຄວາມເຂົ້າໃຈກັນ ລະຫວ່າງ ຊຸມຊົນລາວ ກັບຊຸມຊົນອື່ນໆ ດ້ວຍການໄປຮ່ວມ ສະແດງສິລປະ ວັທນະທັມ ແລະ ການແຂ່ງຂັນກິລາ.

2.7 ຊົມໃຊ້ ສິດ ອຳນາດ ຕາມຂໍ້ກຳໜົດ ກົດໝາຍ ວ່າດ້ວຍ ອົງການຈັດຕັ້ງ ບໍ່ສະແວງຫາ ຜົນກຳໄຣ ເພື່ອເຮັດໃຫ້ ຈຸດປະສົງ ດັ່ງກ່າວ ຖືກປະຕິບັຕ.

## ມາຕຣາ 3: ຮູປຮ່າງຂອງການຈັດຕັ້ງ:

3.1 ສະມາຄົມລາວ-ອະເມຣິກັນ ເປັນອົງການຈັດຕັ້ງ ທີ່ບໍ່ສະແວງຫາຜົນກຳໄຣ ຕັ້ງຂຶ້ນ ເພື່ອຜົລປະໂຍດຂອງຊຸມຊົນລາວ ຈະບໍ່ພົວພັນນຳ ທຸຣະກິດການຄ້າ ການສະແວງຫາປະໂຍດ ສ່ວນຕົວ ຂອງບຸຄົນໃດກຸ່ມໃດ ຄນະໃດ ທັງທາງກົງ ແລະ ທາງອ້ອມ.

3.2 ສະມາຄົມລາວ-ອະເມຣິກັນ ຈະບໍ່ພົວພັນການເມືອງ ນອກເໜືອໄປຈາກ ການປະຕິບັດ ໜ້າທີ່ ພົລະເມືອງດີ ຕາມກົດໝາຍ ຈະບໍ່ສັງກັດ ພັກການເມືອງໃດ ຈະບໍ່ສະເນີຊື່ ແລະ ສະນັບສະໜຸນ ຜູ້ສະມັກເລືອກຕັ້ງໃດ ຈະບໍ່ບໍຣິຈາກເງິນສົມທົບທຶນ ເພື່ອໂຄສະນາຫາສຽງ ຂອງຜູ້ສະມັກເລືອກຕັ້ງ ແລະ ຂອງ ພັກການເມືອງ.

3.3 ເມື່ອສະມາຄົມຖືກຍຸບ ຄນະກັມມະການບໍຣິຫານ ຈະການໃຊ້ຊັບສິນທີ່ມີຢູ່ທັງໝົດ ຊໍາຣະໜີ້ ແລະ ການໃຊ້ຈ່າຍຕ່າງໆຂອງສະມາຄົມໃຫ້ຄົບຖ້ວນ ສ່ວນທີ່ເຫລືອ ຈະຖືກນໍາໄປມອບ ຫລື ແບ່ງປັນໃຫ້ອົງການຈັດຕັ້ງທີ່ບໍ່ມຸ່ງຫວັງຜົນກໍາໄຣ ຕາມຄວາມເຫັນດີ ຂອງຄນະກັມມະການ ອໍານວຍການ.

## ມາຕຣາ 4: ສະມາຊິກະພາບ

4.1 ສະມາຄົມລາວ-ອະເມຣິກັນ ເປີດກວ້າງ ຮັບເອົາຜູ້ມີເຊື້ອຊາຕລາວ-ຖືສັນຊາຕອະເມຣິກັນ ແລະ ຜູ້ມີເຊື້ອຊາຕ ລາວ. ຮວມທັງສາມີ / ພັນລະຍາ, ລູກ, ຫລານ, ລູກລ້ຽງ ຊຶ່ງມີເອກະສານ ການຢູ່ ໃນປະເທດສຫະຣັຖອະເມຣິກາ ( ຣິວສະຕັນ,ເທັກຊັສ) ຖືກຕ້ອງຕາມ ກົດໝາຍ **ເຂົ້າເປັນສະມາຊິກ** ໂດຍປາສະຈາກ ການກີດກັນ ການຈໍາແນກເພດ, ອາຍຸ, ເຜົ່າພັນ, ສາສນາ, ສໍານຽງພາສາເວົ້າ. ຖ້າຜູ້ສະມັກເປັນສະມາຊິກ ສັນຍາຈະປະຕິບັດຕາມ ກົດລະບຽບຂອງການຈັດຕັ້ງ ( ແລະ ໜ້າທີ່ຂອງສະມາຊິກ ຊຶ່ງແຈ້ງຢູ່ໜ້າຫລັງ ຂອງໃບສະມັກ ) ແຕ່ເມື່ອມີປັນຫາ ກ່ຽວກັບຄຸນສົມບັຕຂອງຜູ້ສະມັກ. **ກັມມະການບໍຣິຫານ ຈະເປັນຜູ້ພິຈາຣະນາ ຕັດສິນຊີ້ຂາດ.**

4.2 ຜູ້ຍື່ນໃບສະມັກຂໍ ເປັນສະມາຊິກສະມາຄົມ ຕ້ອງແຈ້ງ ຊີວະປະວັຕ, ທີ່ຢູ່ ໃນແບບ ໃບຄໍາຮ້ອງ ດັ່ງນີ້:

1. ຊື່ ແລະ ນາມສະກຸນ
2. ວັນ ເດືອນ ປີເກີດ ແລະ ສະຖານທີ່ເກີດ
3. ຊື່ຂອງ ພໍ່ ແລະ ແມ່ ຖ້າບໍ່ຂັດຂ້ອງ
4. ໝາຍເລກ ປະກັນສັງຄົມ [Social Security Number] ຖ້າບໍ່ຂັດຂ້ອງ
5. ທີ່ຢູ່ປັດຈຸບັນ ເພື່ອການຕິດຕໍ່ ທາງໄປສະນີ
6. ຖານະຄອບຄົວ: ເປັນໂສດ ຫລື ມີຄອບຄົວ
7. ເລກໝາຍ ໂທຣະສັບ

ຖ້າຜູ້ສະມັກ ເປັນຫົວໜ້າຄອບຄົວ ຕ້ອງແຈ້ງຈໍານວນຄົນໃນຄອບຄົວ ແລະ ຄວາມກ່ຽວພັນກັນ.

4.3 ສະມາຊິກສະມາຄົມລາວ-ອະເມຣິກັນ ແບ່ງເປັນ 3 ປະເພດ ຄື ສະມາຊິກຖາວອນ, ຢຸວະສະມາຊິກແລະສະມາຊິກ ກິຕິມະສັກ.

4.3.1 <u>ສະມາຊິກຖາວອນ</u>: ຄື ບຸຄົນມີອາຍຸ 18 ປີຕັ້ນຂຶ້ນໄປ ຍື່ນໃບຄໍາຮ້ອງ ຂໍເຂົ້າເປັນສະມາຊິກ ຈ່າຍເງິນ ຄ່າບໍາຣຸງ ແລະ ປະຕິບັດຕາມ ກົດລະບຽບຂອງສະມາຄົມ.

4.3.2 <u>ຢຸວະສະມາຊິກ</u>: ຄື ບຸຄົນມີອາຍຸ ຕໍ່າກວ່າ 18 ປີ ມີຊື່ ຢູ່ໃນທະບຽນຄອບຄົວຂອງ ສະມາຊິກຖາວອນ

4.3.3 <u>ສະມາຊິກ ກິຕິມະສັກ</u>: ຄື ບຸຄົນ, ອົງການຈັດຕັ້ງ ທີ່ສະນັບສະໜູນ, ໃຫ້ການຊ່ວຍເຫລືອ ສະມາຄົມ.ສະມາ

**ສະມາຊິກ ກິຕິມະສັກ ອາດສາມາດ ສະມັກເຂົ້າເປັນສະມາຊິກຖາວອນໄດ້ ຕາມເງື່ອນໄຂຂໍ້ 4.3.1 ແຕ່ຕ້ອງ**

**ໄດ້ຮັບຄວາມເຫັນດີ ດ້ວຍສຽງສ່ວນຫລາຍ ຂອງກອງປະຊຸມ ຄນະກັມມະການບໍຣິຫານສະມາຄົມ**

## ມາຕຣາ 5: ຣາຍໄດ້ ແລະ ຄ່າບໍາຣຸງ

5.1 ຣາຍໄດ້ ເພື່ອໃຊ້ຈ່າຍ ໃນການປະຕິບັດງານຂອງສະມາຄົມ ມາຈາກເງິນຄ່າລົງທະບຽນ ເປັນສະມາ ຊິກຖາວອນ ຄ່າບໍາຣຸງສະມາຄົມປະຈໍາປີ ການບໍຣິຈາກຂອງສະມາຊິກ ເພື່ອຊ່ອຍ ບັນເທົາທຸກ ຄອບຄົວສະມາຊິກ ຜູ້ປະສົບເຄາະຮ້າຍ-ເສັຽຊີວິດ ອົງການຈັດຕັ້ງຕ່າງໆ ແລະ ການຈັດງານຫາຣາຍໄດ້.

5.2 ຄ່າລົງທະບຽນ ເປັນສະມາຊິກຖາວອນ ທ່ານລະ $5.00 ຄ່າບຳຣຸງປະຈຳປີ ຄອບຄົວລະ $15.00 ຄ່າບຳຣຸງດັ່ງກ່າວ ອາດປ່ຽນແປງໄດ້ໃນອານາຄົດ.

## ມາດຣາ 6: ເຈົ້າໜ້າທີ່ປະຈຳຂອງການຈັດຕັ້ງ

6.1 ເຈົ້າໜ້າທີ່ປະຈຳຂອງສະມາຄົມ ແບ່ງເປັນ 2 ຄນະ ຄື ກັມມະການອຳນວຍການ [Board of Directors] ແລະ ກັມມະການ ບໍຣິຫານ [Board of Executives]

6.2 ກັມມະການອຳນວຍການ ມີຈຳນວນຢ່າງນ້ອຍ 5 ທ່ານ ຣວມທັງປະທານສະມາຄົມສະມາຊິກຖາວອນ ເລືອກກັມມະການອຳນວຍການ ໃນກອງປະຊຸມໃຫຍ່ປະຈຳປີ ຢູ່ໃນຕຳແໜ່ງ 4 ປີ ເມື່ອຄົບກຳໜົດແລ້ວຈະສະມັກຮັບການເລືອກຕັ້ງອີກກໍໄດ້.

6.3 ກັມມະການບໍຣິຫານ ບໍ່ຈຳກັດຈຳນວນ ປະທານຕັ້ງ ຕາມຄວາມເໝາະສົມ ດ້ວຍຄວາມເຫັນດີຂອງກັມມະການອຳນວຍການ. ຢູ່ໃນຕຳແໜ່ງ 4 ປີ ເມືອຄົບກຳນົດແລ້ວ ອາດຖືກຕັ້ງໃໝ່ອີກກໍໄດ້.

6.3.1 ກັມມະການ ບໍຣິຫານຂອງສະມາຄົມ ປະກອບດ້ວຍ:

1. ປະທານ ສະມາຄົມ
2. ຮອງປະທານ ສະມາຄົມ 2 ທ່ານ
3. ເລຂານຸການ
4. ນາຍຄັງ
5. ປະທານ ກັມມະການ ງົປະມານ ແລະ ຫາຣາຍໄດ້
6. ປະທານ ກັມມະການ ສິລປະ ແລະ ວັທນະທັມ
7. ປະທານ ກັມມະການ ຊ່ອຍເຫລືອຄອບຄົວສະມາຊິກ
8. ປະທານ ກັມມະການ ສົ່ງເສີມການສຶກສາ
9. ປະທານ ກັມມະການ ສົ່ງເສີມການກິລາ
10. ປະທານ ກັມມະການ ປະຊາສັມພັນ

6.3.2 ເພື່ອໃຫ້ການປະຕິບັດວຽກງານ ຂອງແຕ່ລະກັມມະການ ມີປະສິດທິພາບບັນລຸຜົນສຳເຣັດຕາມໂຄງການ ທີ່ໄດ້ກຳໜົດໃວ້ແລ້ວ. ປະທານກັມມະການ ຈະຮັບເອົາສະມາຊິກເຂົ້າຮ່ວມໃນຄນະໄດ້ ໂດຍບໍ່ຈຳກັດຈຳນວນ ແລະ ຈະປະຊຸມວາງແຜນເຮັດວຽກກໍໄດ້ ແຕ່ຕ້ອງຣາຍງານ ໃຫ້ປະທານຊາບທຸກຄັ້ງ ບັນທຶກການປະຊຸມນັ້ນໃວ້ທຸກເທື່ອ ເພື່ອໃຫ້ເລຂານຸການສະມາຄົມເກັບມ້ຽນໃວ້ເປັນຫລັກຖານ.

6.3.3 ປະທານສະມາຄົມ ເປັນປະທານ ກັມມະການ ອຳນວຍການ ແລະ ບໍຣິຫານ. ປະທານສະມາຄົມຖືກເລືອກ ດ້ວຍສຽງສ່ວນຫລາຍ ຂອງສະມາຊິກຖາວອນ ທີ່ເຂົ້າຮ່ວມກອງປະຊຸມປະຈຳປີ.ຢູ່ໃນຕຳແໜ່ງ4 ປີເມື່ອ ຄົບກຳນົດແລ້ວ. ມີສິດຮັບເລືອກ ເປັນປະທານໄດ້ອີກ.

## ມາດຣາ 7: ອຳນາດ ແລະ ໜ້າທີ່

7.1 ສະມາຊິກ ກັມມະການບໍຣິຫານ ຕ້ອງຄິດຄົ້ນ ວາງແຜນ ກຳໜົດເປົ້າໝາຍ ເພື່ອລົງມື ປະຕິບັດ ແຕ່ການປະຕິບັດວຽກງານນັ້ນຕ້ອງໃຫ້ສອດຄ່ອງ ກັບຈຸດປະສົງຫລັກຂອງສະມາຄົມ ແລະໄດ້ຮັບຄວາມເຫັນດີຈາກປະທານ ແລະ ຮອງປະທານ ສະມາຄົມ.

7.2 ປະທານສະມາຄົມ ເປັນເຈົ້າໜ້າທີ່ອາວຸໂສ ຂອງການຈັດຕັ້ງ ມີໜ້າທີ່ ຮັບຜິດຊອບ ການປະຕິບັດງານ ຂອງ ທຸກກັມມະການ ໜ້າທີ່ຂອງປະທານສະມາຄົມ ມີດັ່ງນີ້:

1. ກຳກັບ ຊີ້ນຳ ການປະຕິບັດງານ ຂອງ ກັມມະການຕ່າງໆ ຢ່າງໃກ້ຊິດ.

2. ກຳກັບ ໃຫ້ຄນະກັມມະການອຳນວຍການ, ກັມມະການບໍຣິ
3. ທານ ຢູ່ໃນຂອບເຂດ ນະໂຍບາຍຫລັກ ແລະ ກົດລະບຽບ ຂອງສະມາຄົມ.
4. ນັ່ງເປັນປະທານ ຂອງກອງປະຊຸມ ກັມມະການອຳນວຍການ ແລະ ບໍຣິຫານ.
5. ເປັນຜູ້ຕາງໜ້າສະມາຄົມ ໃນກອງປະຊຸມ ທີ່ຢູ່ນອກຊຸມຊົນລາວ.
6. ຮ່ວມເຊັນຊື່ໃນເອກະສານ ກັບ ເຈົ້າໜ້າທີ່ ກັມມະການອຳນວຍການ ແລະ ບໍຣິຫານ.

7.3 ຮອງປະທານ ປະຕິບັດງານ ຕາມທີ່ປະທານໄດ້ມອບໝາຍ ຫລື ກອງປະຊຸມເຫັນດີ. ປະຕິບັດໜ້າທີ່ຕາງປະທານ ເມື່ອປະທານບໍ່ຢູ່ ຫລື ບໍ່ສາມາດ ປະຕິບັດໜ້າທີ່ໄດ້ ໃນກໍຣະນີທີ່ ຕຳແໜ່ງປະທານຫວ່າງລົງ ຮອງປະທານ ເປັນຜູ້ຮັກສາການຕາງຈົນ ກວ່າຈະໝົດອາຍຸສະໄມ ແລະ ມີການເລືອກຕັ້ງປະທານໃໝ່.

7.4 ເລຂານຸການ ມີໜ້າທີ່ ຈັດຕຽມການປະຊຸມ ຈັດລະບຽບ ວາຣະ ແລະ ຫົວຂໍ້ປະຊຸມ ບັນທຶການປະຊຸມ ເກັບມ້ຽນ ປະທັບຕຣາ ເອກະສານຕ່າງໆຂອງສະມາຄົມ ແລະ ປະຕິບັດໜ້າທີ່ອື່ນ ທີ່ປະທານ ຫລື ກອງປະຊຸມ ມີມະຕິ ເຫັນດີມອບໝາຍໃຫ້.

7.5 ນາຍຄັງ ຮັບຜິດຊອບ ການເງິນ ຈົດບັນຊີ ຣາຍໄດ້ ຣາຍຈ່າຍ ເປີດບັນຊີຝາກເງິນ ນຳເງິນໄປຝາກທະນາຄານ ຈົດບັນຊີ ຊັພສິນຂອງສະມາຄົມ ຂຽນ ແລະ ເຊັນຊື່ ຮ່ວມກັບປະທານ ຫລື ເຈົ້າທີ່ອື່ນ ທີ່ປະທານ ຫລື ກອງປະ ຊຸມ ມີມະຕິ ເຫັນດີ ເຊັ່ນ ການເຊັນເຊັກຈ່າຍເງິນ ເພື່ອການປະຕິບັດພາຣະກິດຂອງສະມາຄົມ.

7.6 ປະທານ ກັມມະການງົປະມານ - ຫາຣາຍໄດ້ ມີໜ້າທີ່ ຈັດງົປະມານປະຈຳປີ ຄວບຄຸມ ການໃຊ້ຈ່າຍ ຂອງສະ ມາຄົມ ໃຫ້ ຖືກຕ້ອງຕາມກົດລະບຽບ ແລະ ຈັດງານຫາຣາຍໄດ້.

7.7 ປະທານ ກັມມະການ ສິລປະ-ວັທນະທັມ ມີໜ້າທີ່ ລິເລີ່ມ ວາງແຜນ ອະນຸຮັກ ສົ່ງເສີມສິລປະ ດົນຕຣີການຟ້ອນນາຕະສິລ ການປະຕິບັດຮີດຄອງ ປະເພນີ ຊຶ່ງເປັນມູນມໍຣະດົກລາວ. ໂດຍແນໃສ່ ບັນດາເຍົາວະຊົນ ເພື່ອໃຫ້ພວກເຂົາມີໂອກາດໄດ້ເຫັນ ໄດ້ຮຽນຮູ້ ແລະ ນິຍົມສິລປະ ວັທນະທັມລາວ.

7.8 ປະທານ ກັມມະການ ບັນເທົາທຸກ ມີໜ້າທີ່ ວາງແຜນ ກຳກັບ ເບິ່ງແຍງ ການຊ່ອຍເຫລືອບັນເທົາທຸກ ຄອບຄົວສະມາຊິກ ທີ່ຖືກເຄາະຮ້າຍ - ເສັຽຊີ ວິຕ ຕາມປະເພນີ ທີ່ເຄີຍປະຕິບັດ ສືບທອດກັນມາ.

7.9 ປະທານ ກັມມະການສົ່ງເສີມການສຶກສາ ມີໜ້າທີ່ ປຸກລະດົມໃຫ້ສະມາຊິກທຸກເພດ ທຸກວັຍ ຕື່ນຕົວ ຮັບຮູ້ຄຸນຄ່າ ຂອງການສຶກ ສາ ແລະ ພັທະນາຕົນເອງ.

7.10 ປະທານ ກັມມະການ ສົ່ງເສີມການກິລາ ມີໜ້າທີ່ເຕົ້າໂຮມ ຝຶກຊ້ອມກິລາຕ່າງ ໆໂດຍແບ່ງເປັນຄນະ ຈັດໃຫ້ ມີການແຂ່ງ ຂັນ ພາຍໃນຊຸມຊົນລາວ ໂອກາດບຸນປະເພນີປະຈຳປີ ສົ່ງນັກກິລາໄປຮ່ວມແຂ່ງຂັນກັບຊຸມຊົນອື່ນ ເຊີນນັກກິລາ ຈາກຊຸມຊົນອື່ນ ມາຮ່ວມການແຂ່ງຂັນ ເພື່ອມິຕະພາບ ແລະ ຄວາມ ຮັກແພງ.

7.11 ປະທານ ກັມມະການ ປະຊາສັມພັນ ມີໜ້າທີ່ ເຜີຽແຜ່ຂ່າວສານ ຜົນງານພາກປະຕິບັດ ຂອງສະມາຄົມ ໃຫ້ ສະມາຊິກ ແລະ ມວນຊົນທົ່ວໄປໄດ້ຮູ້ ທັງດ້ວຍປາກເວົ້າ ເລົ່າຕໍ່ໆ ກັນຟັງ ແລະ ອອກວາຣະສານ ຫລື ພິມ ເອກະສານແຈກຢາຍ.

7.12.ກັມມະການອຳນວຍການ ມີໜ້າທີ່ ກຳໜົດນະໂຍບາຍ ເບິ່ງແຍງການປະຕິບັດ ໂຄງການ ຕ່າງໆ ຂອງສະມາຄົມ ໃຫ້ຄວາມປຶກສາ, ແນະນຳ ຮ່ວມກັນ ກັບຄນະທີ່ປຶກສາສະມາຄົມ ເພື່ອຊຸກຍູ້ ຊ່ອຍເຫລືອ ກັມມະການບໍຣິຫານ ປະຕິບັດວຽກງານ ໃຫ້ບັນລຸຜົນສຳເຣັດຕາມຄວາມຄາດໝາຍ.

<u>ມາຕຣາ 8 : ການເລືອກຕັ້ງ</u>

8.1 ສະມາຊິກຖາວອນ ມີສິດສະມັກເຂົ້າຮັບການເລືອກຕັ້ງ ສະເນີຊື່ບຸຄຄົນທີ່ເຫັນວ່າເໝາະສົມຖ້າຜູ້ຖືກສະເນີຊື່ ບໍ່ມີຄວາມຂັດຂ້ອງ) ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງເລືອກຕັ້ງ.

8.2 ຜູ້ສະມັກຫລືຜູ້ຖືກສະເນີຊື່ໃຫ້ເຂົ້າສະມັກເລືອກ ເປັນກັມມະການອຳນວຍການ ມີສິດສະມັກຮັບການເລືອກຕັ້ງ ເປັນປະທານສະມາ ຄົມ ຄວບກັນໄດ້.

8.3 ກັມມະການ ອຳນວຍການ ມີຈຳນວນ10ທ່ານ ຜູ້ສະມັກທີ່ໄດ້ຄະແນນສຽງນິຍົມຫລາຍທີ່ 1 ຫາທີ່ 10 ຖືກວ່າໄດ້ຮັບການເລືອກ ຕັ້ງ ຜູ່ສະມັກທີ່ໄດ້ຄະແນນສຽງທີ່ 11 ຖືວ່າ ເປັນຜູ້ຖືກເລືອກສຳຮອງ ເພື່ອແທນຕຳແໜ່ງ ກັມມະການອຳນວຍການ ທີ່ອາດ ຫວ່າງລົງ ໃນອານາຄົຕ.

8.4 ປະທານສະມາຄົມ **ຖືກເລືອກ ດ້ວຍຄະແນນສຽງສ່ວນຫລາຍ ຫລື ເກີນເຄິ່ງ ຂອງສະມາຊິກ ທີ່ເຂົ້າຮ່ວມກອງປະ ຊຸມ** ຖ້າຜູ້ສ ມັກໄດ້ຄະແນນສຽງ ຫລາຍເປັນທີ່ 1 ແຕ່ບໍ່ເກີນເຄິ່ງ ຫລື ມີຜູ້ສະມັກ 2 ທ່ານໄດ້ຄະແນນສຽງເທົ່າກັນ **ໃຫ້ ເລືອກໃໝ່** ລະຫວ່າງຜູ້ ສະມັກ ໄດ້ຄະແນນສຽງທີ່ 1 ແລະ ທີ່ 2 ຫລື ລະຫວ່າງ ຜູ້ສມັກ 2 ທ່ານທີ່ໄດ້ຄະແນນສຽງເທົ່າກັນ ເພື່ອໃຫ້ໄດ້ຄະແນນນິຍົມ **ເກີນເຄິ່ງ** ແລະ ຕ້ອງເລືອກຕັ້ງ ໃນກອງປະຊຸມນີ້ດຽວກັນນັ້ນ.

8.5 ກ່ອນຄົບກຳໜົດປີການ ແລະມື້ໄຂກອງປະຊຸມໃຫຍ່ 2 ເດືອນ ປະທານສະມາຄົມ ຕັ້ງ**ຜູ້ອຳນວຍການເລືອກຕັ້ງ ເພື່ອເລືອກກັມມະ ການຊຸດໃໝ່** ຜູ້ອຳນວຍການເລືອກຕັ້ງ ປະກາດຫາຜູ້ສະມັກເລືອກເປັນປະທານສະມາຄົມ ແລະ ກັມມະການອຳນວຍການ ທີ່ຈະ ຫວ່າງລົງ ຜູ້ສົນໃຈຕ້ອງຍື່ນໃບສະມັກ ນຳຜູ້ອຳນວຍການເລືອກຕັ້ງ ສ່ວນສະຖານທີ່ ແລະ ວັນເວລາ ຂອງການປະຊຸມເລືອກຕັ້ງນັ້ນ ເລຂານຸການສະມາຄົມ ຈະເປັນຜູ້ກຳໜົດ.

8.6 ຜູ້ອຳນວຍການ ຕັ້ງຄນະກັມມະການເລືອກຕັ້ງ ວາງແຜນ ປະກາດຊອກຫາຜູ້ສົນໃຈສະມັກ ດຳເນີນການເລືອກຕັ້ງ ໃຫ້ ເປັນຜົນສຳເຣັດ ຢ່າງບໍຣິສຸດ ຍຸຕິທັມ ແລະ ຖືກຕາມກົດລະບຽບຂອງສະມາຄົມ.

8.7 ຜູ້ອຳນວຍການ ບໍ່ມີສິດ ສະມັກຮັບການເລືອກຕັ້ງ ແຕ່ຖ້າມີສະມາຊິກສະເນີຊື່ ແລະ ຜູ້ກ່ຽວບໍ່ຄັດຂ້ອງ ຕ້ອງລາອອກຈາກຕຳ ແໜ່ງ. ປະທານສະມາຄົມ ຈະແຕ່ງຕັ້ງຜູ້ໃໝ່ແທນ ດ້ວຍຄວາມເຫັນດີຂອງກອງປະຊຸມ.

8.8 ກ່ອນການເລືອກຕັ້ງ ປະທານສະມາຄົມຣາຍງານຜົນງານ ການປະຕິບັຕໜ້າທີ່ ຂອງປີ ທີ່ຜ່ານມາ. ໄຂໂອກາດໃຫ້ຜູ້ສົນໃຈ ຊັກຖາມຈົນພໍໃຈແລ້ວ ຈຶ່ງມອບສິດອຳນາດ ການເປັນປະທານ ກອງປະຊຸມໃຫ້ຜູ້ອຳນວຍການເລືອກຕັ້ງປະທານສະມາຄົມ ເພື່ອ ດຳເນີນການເລືອກຕັ້ງ ຕາມລະບຽບຕໍ່ໄປ.

8.9 ຜູ້ອຳນວຍການເລືອກຕັ້ງ ປະກາດຊື່ຜູ້ສະມັກ ອະທິບາຍກົດລະບຽບການເລືອກຕັ້ງຈັດໃຫ້ຜູ້ສະມັກຈັບສະລາກ ເອົາເລກໝາຍການ ເລືອກຕັ້ງ ແລ້ວສະເນີໃຫ້ບັນດາຜູ້ສະມັກ ກ່າວແນະນຳຕົວເອງ ແຈ້ງນະໂຍບາຍ ແລະໂຄງການຈະປະຕິບັຕ ຖ້າໄດ້ຮັບການ ເລືອກ ເປັນປະທານສະມາຄົມ. ເພື່ອໃຫ້ສະມາຊິກໄດ້ຊາບ ແລະ ຊັກຖາມ ຈົນພໍໃຈແລ້ວຈຶ່ງຈັດໃຫ້ມີການອອກສຽງ ປ່ອນບັ ຕເລືອກຕັ້ງ,

8.10 ປະທານສະມາຄົມ ແລະ ຄນະກັມມະການຊຸດເກົ່າ ຈະຢູ່ໃນຕຳແໜ່ງ ໜ້າທີ່ຮັກສາການຕໍ່ໄປ ຈົນກວ່າ ຈະໄດ້ມອບໝາຍວຽກງານ ໃຫ້ປະທານ ແລະ ຄນະກັມມະການຊຸດໃໝ່ ພາຍໃນໄລຍະ 2 ເດືອນ ຫລັງວັນເລືອກຕັ້ງ.

## <u>ມາຕຣາ 9 : ລະບຽບ - ວາຣະການປະຊຸມ</u>

9.1 **ກອງປະຊຸມໃຫຍ່** ຫລື ກອງປະຊຸມຫລວງ ຈັດຂຶ້ນປີລະຄັ້ງ ເພື່ອໃຫ້ປະທານສມາຄົມ ຣາຍງານ ການປະຕິບັຕພາຣະກິດປະຈຳປີ ຫລື **ເພື່ອເລືອກປະທານ ແລະ ກັມມະການຊຸດໃໝ່ ທຸກ 4 ປີ** ພາຍໃນ ວັນທີ່ 1-15 ຂອງເດືອນ ພຶສະຈິກາ ( ແຕ່ບໍ່ໃຫ້ກາຍ ເດືອນ ທັນວາ) ສະຖານທີ່ ວັນ ເວລາ ແລະ ວາຣະການປະຊຸມ ເລຂານຸການຈະປະກາດໃຫ້ສະມາຊິກຊາບ ຫລັງຈາກໄດ້ ປຶກສາ ກັບ ປະທານ ແລະ ຮອງປະທານສະມາຄົມ,

9.2 **ກອງປະຊຸມດ່ວນ** ບໍ່ມີກຳໜົດ ແລ້ວແຕ່ສະພາບການ ຕາມຄວາມເຫັນດີ ຂອງກັມມະການອຳນວຍການ **ກອງປະຊຸມພິເສດ** ຈັດໃຫ້ມີຂຶ້ນ ຕາມຄວາມຮ້ອງຂໍ ຂອງສະມາຊິກຖາວອນ ຈຳນວນ ບໍ່ຕ່ຳກວ່າ 10% ຂອງ ສະມາຊິກທັງໝົດ ດ້ວຍການແຈ້ງ ບັນ ຊີຣາຍຊື່ ພ້ອມລາຍເຊັນ ສະເນີປະທານສະມາຄົມ ເພື່ອຈັດ ໃຫ້ມີກອງປະຊຸມຂຶ້ນ.

9.3 **ກອງປະຊຸມ ກັມມະການບໍຣິຫານ** ຈັດໃຫ້ມີຂຶ້ນເດືອນລະຄັ້ງ ຫລື ຫລາຍກວ່າ ຖ້າຫາກ ກັມມະການອຳນວນການ ແລະ ກັມມະ ການ ບໍຣິຫານ ເຫັນສົມຄວນ.

ເລຂານຸການ ສົ່ງໜັງສືແຈ້ງຂ່າວ ກອງຊຸມໃຫຍ່ ໃຫ້ສະມາຊິກຊາບລ່ວງໜ້າ ຢ່າງນ້ອຍ 2 ອາທິຕ ສ່ວນການປະຊຸມປະເພດອື່ນນັ້ນ ຈະແຈ້ງທາງໂທຣະສັບ ກ່ອນ ການປະຊຸມ 24 ຊົ່ວໂມງກໍໄດ້ ການແຈ້ງຂ່າວ ປະຊຸມທຸກຄັ້ງ ຕ້ອງບອກ ສະຖານທີ່ ວັນ ເວ ລາ ແລະ ຫົວຂໍ້ປະຊຸມ.

9.5 ປະທານປະກາດໄຂ ເລຂານຸການອ່ານບັນທຶກຫຍໍ່ ກອງປະຊຸມຄັ້ງທີ່ຜ່ານມາ ແລະ ຫົວຂໍ້ປະຊຸມ ແລ້ວມອບໃຫ້ ປະທານ ດຳເນີນ ການປະຊຸມ ຕາມຣາຍການ ຖ້າມີການສເນີຫົວຂໍ້ປະຊຸມຕື່ມ ຕ້ອງໄດ້ຮັບຄວາມເຫັນດີ ເປັນເອກະສັນຈາກກອງປະຊຸມ ຈຶ່ງຈະພິ ຈາຣະນາ ອະພິປຣາຍ ແລະ ລົງມະຕິໄດ້.

9.6 ການລົງມະຕິໃນກອງປະຊຸມ ອາດອອກສຽງທາງລັບ ຫລື ເປີດເຜີຍ ຖ້າອອກສຽງທາງລັບ ການນັບຄະແນນສຽງ ຕ້ອງນັບ ຢ່າງເປີດເຜີຍ ມີການບັນທຶກໄວ້ຢ່າງຄົບຖ້ວນ. ໃຫ້ເລຂາ. ເປັນຜູ້ນັບ ແລະ ປະກາດ ຜົນການອອກສຽງ

9.7: ສະມາຊິກ ທີ່ເຂົ້າຮ່ວກອງປະຊຸມ ຕ້ອງຈົດຊື່ ນາມສະ ກຸນ ທີ່ຢູ ແລະ ເລກໝາຍໂທຣະສັບ ໃນປຶ້ມທະບຽນການ ປະຊຸມ ຊຶ່ງເລຂານຸການ ເປັນຜູ້ກຳກັບ ແລະ ຈັດກຽມ.

9.8 ສະມາຊິກເຂົ້າຮ່ວມການປະຊຸມ ມີສິດ ແລະ ມີໜ້າທີ່ ອອກຄວາມຄິດເຫັນ ຕາມຫົວຂໍ້ການປະຊຸມ ທີ່ຖືກນຳຂື້ນມາພິຈາຣະນາ. ປະທານກອງປະຊຸມ ຈະເປັນຜູ້ອະນຸຍາຕ ແລະ ກຳໜົດເວລາໃຫ້ສະມາຊິກແຕ່ລະທ່ານເວົ້າສະເນ ແລະ ສະແດງ ຄວາມຄິດເຫັນ ຕາມລຳດັບ ຂອງຜູ່ຊູ້ມື ຂໍອະນຸຍາຕ ເວົ້າກ່ອນ ແລະ ຫລັງ.

9.9 ການລົງມະຕິ ຮັບເອົາເຣື່ອງໃດໆກໍຕາມ ຈະຕ້ອງມີການອະພິປຣາຍ ສະແດງຄວາມຄິດເຫັນ ຈົນພໍໃຈຂອງສະມາຊິກໃນການປະ ຊຸມກ່ອນ ຈື່ງລົງມະຕິໄດ້. ສຽງສ່ວນຫລາຍຂອງສະມາຊິກ ຖືວ່າ: **ເດັດຂາດ ມີຜົນໃນທາງປະຕິບັດ**

<u>ມາຕຣາ 10: ອາຍຸຂອງເຈົ້າໜ້າທີ່ ແລະ ສະມາຊິກ</u>

10.1 ອາຍຸຂອງການເປັນສະມາຊິກ ບໍ່ມີກຳໜົດ ນອກຈາກຖືກໄລ່ອອກເພາະບໍ່ປະຕິບັຕຕາມກົດລະບຽບ, ທຳຜິດຮ້າຍແຮງ,ລາອອກ, ຍ້າຍໄປຢູ້ຕ່າງເມືອງ ຫລື ຕ່າງຣັຖ ແລະ ເສັຽຊີວິຕ

10.2 ການຢູ່ໃນຕຳແໜ່ງປະທານ, ກັມມະການອຳນວຍການ ແລະບໍຣິຫານຈະສ່ຽງສຸດລົງຕາມເງື່ອນໃຂດັງຕໍ່ໄປນີ້:

ຄົບກຳໜົດປີການ

ລາອອກ

ເສັຽຊີວິຕ

4. ຖືກໄລ່ອອກ ເນື່ອງຈາກ ທຳຜິດຮ້າຍແຮງຫລືບໍ່ສາມາດ ປະຕິບັຕໜ້າທີ່ຮັບຜິດຊອບ.

10.3 ການກ່າວໂທດໄລ່ເຈົ້າໜ້າທີ່ ແລະ ສະມາຊິກອອກນັ້ນ ຕ້ອງເປັນມະຕິສຽງສ່ວນຫລາຍຂອງກອງປະຊຸມ ຜູ້ຖືກກ່າວຫາ ອາດສາ ມາດຫາພະຍານບຸຄົນ ແລະ ເອກະສານໄປປະກອບ ແກ້ການຖືກກ່າວໂທດໄດ້ ແລະມະຕິສຽງສ່ວນຫລາຍ ຂອງກັມມະການບໍຣິຫານ ຖືວ່າ ເປັນການຕັດສິນຊີ້ຂາດ.

<u>ມາຕຣາ 11: ການເກັບມັຽນ ແລະ ບັນທຶກ ເອກະສານ</u>

11.1 ເອກະສານຕ່າງໆຂອງການຈັດຕັ້ງ ຕ້ອງບັນທຶກໃວ້ ໃຫ້ຖືກຕ້ອງຄົບຖ້ວນສາມາດກວດກາໄດ້ທຸກເວລາ ທີ່ຕ້ອງການ. ເອກະສານ ສຳຄັນເຫລົ່ານັ້ນຄື:

ປື້ມບັນຊີ ຣາຍຮັບ ແລະ ຣາຍຈ່າຍ

ບັນຊີ ເງິນຝາກທະນາຄານ ແລະ ຊັພສິນຂອງສະມາຄົມ

ປື້ມ ບັນທຶກ ການປະຊຸມ

ປື້ມ ບັນຊີ ຊື່ທີ່ຢູ່ແລະ ເລກໝາຍໂທຣະສັບ ຂອງສະມາຊິກ

<u>ມາຕຣາ 12: ປີງົປະມານ</u>

12.1 ປີງົປະມານສະມາຄົມ ເລີ່ມ ວັນທີ່ 1 ມົກະຣາສ່ຽງສຸດ ວັນທີ່ 31 ທັນວາ ຂອງແຕ່ລະປີ

<u>ມາຕຣາ 13: ການປຽນ-ແປງ ກົດລະບຽບ</u>

13.1 ທັມມະນູນ-ກົດລະບຽບການຈັດຕັ້ງ ອາດສາມາດ ມີການດັດແປງ ຕື່ມເຂົ້າ-ຕັດອອກໄດ້ ຕາມສະພາບການ ແລະ ຄວາມເໝາະສົມ ເພື່ອໃຫ້ການປະຕິບັຕວຽກງານ ບັນລຸຜົນສຳເຣັດຕາມຄວາມຄາດໝາຍ. ກອງປະຊຸມກັມມະການອຳນວຍການ ແລະ ບໍຣິຫານ ພິຈາຣະນາ ສຶກສາ ການປຽນແປງທັມມະນູນ ຖ້າເຫັນດີ ກໍຈະນຳສະເນີກອງປະຊຸມໃຫຍ່ ເພື່ອໃຫ້ກອງປະຊຸມລົງຄະແນນ ສຽງຮັບຮອງເອົາ. ສ່ວນສະມາຊິກ ທີ່ໄປຮ່ວມກອງປະຊຸມບໍ່ໄດ້ ຈະລົງຄະແນນສຽງ ທາງໄປສະນີ ໃນໜັງສື "ມະຕິ" ການລົງຄະ ແນນສຽງ ທີ່ອັດແນບໄປກັບໝາຍນັດປະຊຸມກໍໄດ້

<u>ມາຕຣາ 14: ຄ່າຕອບແທນ</u>

14.1 ເຈົ້າໜ້າທີ່ປະຈຳສະມາຄົມ: ປະທານ, ເລຂານຸການ, ນາຍຄັງ ແລະ ກັມມະການຕ່າງໆນັ້ນ ບໍ່ມີເງິນເດືອນ, ບໍ່ມີ ຄ່າຈ້າງ,ຣາງວັນ ຫລື ເງິນຄ່າຕອບແທນ. ແນວໃດກໍຕາມ, ຄ່າໃຊ້ຈ່າຍຕ່າງໆ ທີ່ກ່ຽວກັບການປະຕິບັຕວຽກງານຂອງສະມາ

ຄົມ ກໍອາດໃຊ້ແທນຄືນໄດ້ ຕາມຄວາມເໝາະສົມ.ແຕ່ຕ້ອງມີ ໃບຮັບເງີນ ຖືກຕ້ອງ, ຄົບຖ້ວນ. ທັງນີ້ ເພື່ອຄວາມເປັນລະບຽບ, ສະດວກ ໃນການຄິດໄລ່ບັນຊີ. ແລະ ຄວບຄຸມ-ກວດກາ ການເບີກຈ່າຍເງີນສະມາຄົມ.

ໝາຍເຫດ: 1 ທັມມະນູນ-ກົດລະບຽບ ສະມາຄົມລາວ-ອະເມຣິກັນ ສະບັບດັດແປງແກ້ໄຂໃໝ່ນີ້ ໄດ້ຮັບການອະນຸຍາຕແລະໃຫ້ມີຜົນໃຊ້ປະ⁄ ຕິບັຕໄດ້⁄ ຢ່າງເປັນທາງການ⁄ ຈາກ ເລຂາທິການ ຣັຖເທັກຊັສ ໃນ ວັນທີ່ 27 ທັນວາ 2001 ແລະ ກັມມະການປະຊາສັມ⁄ ພັນສະມາຄົມໄດ້ພີມ⁄ ເຜີຽແຜ່ໃຫ້ສະມາຊິກຊາບ ໃນນິຕຍະສານ "ສາຍສັມພັນລາວ" ສະບັບ ປະຈໍາເດືອນມີຖຸນາ 2002

2.ມາຕຣາ 4 ວ່າດ້ວຍສະມາຊິກະພາບ ຂໍ້ 3/3 ໄດ້ຖືກດັດແປງ ຕື່ມເຂົ້າ ເພື່ອໃຫ້ສິດສະມາຊິກກິຕະມະສັກ ສາມາດສະມັກເຂົ້າ ເປັນສະມາຊິກຖາວອນໃນກອງປະຊຸມກັມມະການບໍຣິຫານ ຄັ້ງວັນທີ່ 13 ກຸມພາ 2005 ດ້ວຍຄະແນນສຽງເຫັນດີ ເປັນເອກະສັນ

ພອນ ຈັນທະຣາຊ

ປະທານສະມາຄົມລາວ-ອະເມຣິກັນ ປີ 2001-2002